# ເມືອງໂຂງ

" ເມືອງໂຂງ ຖິ່ນຕຳນານ, ສຽງລຳສີພັນດອນ ຄອນພະເພງ ລີຊ່າ,
ຊົມປາຂ່າ ຫາງຄອນ, ນ້ຳຕານກ້ອນ ຫອມຫວານ ບ້ານຫີນສື່ວ,
ຊົມຫິວທັດ ໝູ່ເກາະດອນ, ກິນກ້ອຍປາພອນ ເມືອງໂຂງ "



# ໃນອະດີດ ແລະ ປັດຈຸບັນ

## Muang Khong District : The Past and the Present


ຄົ້ນຄວ້າ ແລະ ຮຽບຮຽງໂດຍ: ຄຳເພົາ ພອນແກ້ວ



ສະໜັບສະໜູນໂດຍ:
ໂຄງການພັດທະນາການທ່ອງທ່ຽວແບບຍືນຍົງ
Sustainable Tourism Development Project

2010

ຂໍມອບໃຫ້ ນັຊ ດາເຄີນ

ທີ່ຮັກແພງ

[signature]

ຄຳເພົາ ພອນແກ້ວ

24/03/2010

# ເມືອງໂຂງ
# ໃນອະດີດ ແລະ ປັດຈຸບັນ

" ເມືອງໂຂງ ຖິ່ນຕຳນານ, ສຽງລຳສີພັນດອນ ຄອນພະເພງ ລີຊ່າ,
ຊົມປາຂ່າ ຫາງຄອນ, ນ້ຳຕານກ້ອນ ຫອມຫວານ ບ້ານຫີນສິ່ວ,
ຊົມທິວທັດ ໝູ່ເກາະດອນ, ກິນກ້ອຍປາພອນ ເມືອງໂຂງ "



ຄົ້ນຄວ້າ ແລະ ຮິບໂຮມໂດຍ: ຄຳເພົາ ພອນແກ້ວ

2009

# ຄຳນຳ

# ຂອງ ລັດຖະມົນຕີ ປະທານອົງການທ່ອງທ່ຽວແຫ່ງຊາດ

ປື້ມ " ເມືອງໂຂງໃນອະດີດ ແລະ ປັດຈຸບັນ " ຫຼື ບາງຄົນກໍໃຫ້ຊື່ ຍົກຍ້ອງວ່າ ເຂດມະຫານະທີ ສີພັນດອນ ທີ່ທ່ານກຳລັງຖືຢູ່ນີ້, ນັບວ່າເປັນ ຮູບແບບໜຶ່ງຂອງການສົ່ງເສີມການທ່ອງທ່ຽວພາຍໃນປະເທດ ທີ່ໃຫ້ຄວາມ ຮູ້ຢ່າງກ້ວາງຂວາງ ແກ່ຜູ້ອ່ານເປັນຢ່າງດີ ກ່ຽວກັບທ້ອງຖິ່ນໜຶ່ງ ຂອງປະເທດ ສປປ ລາວ ຂອງພວກເຮົາ.

ດັ່ງທີ່ພວກເຮົາຮູ້ນຳກັນແລ້ວວ່າ, ນັບແຕ່ປະເທດຊາດຂອງພວກເຮົາ ໄດ້ຮັບການສ້າງຕັ້ງເປັນປະເທດ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນ ລາວ ແຕ່ປີ 1975 ເປັນຕົ້ນມາ, ສິ່ງທີ່ພວກເຮົາມີຄວາມທະນົງໃຈຢ່າງປະຕິ ເສດບໍ່ໄດ້ກໍ່ຄືຄວາມສະຫງົບສຸກຂອງພໍ່ແມ່ປະຊາຊົນ ໃນທຸກທົ່ນແຫ່ງພາບ ໃນປະເທດ. ພື້ນຖານໂຄງລ່າງກໍ່ອຳນວຍຄວາມສະດວກໄດ້ເປັນຢ່າງດີ ໃຫ້ ແກ່ການເດີນທາງໄປມາຫາສູ່ກັນ ຂອງພີ່ນ້ອງຊາວລາວ ບັນດາເຜົ່າ ໃນ ທຸກໆແຂວງ, ຊຶ່ງກ່ອນການປົດປ່ອຍແມ່ນຄິດຫາບໍ່ເຫັນ. ບໍ່ພຽງແຕ່ບໍ່ເຄີຍ ເຫັນມີລົດຂົນສົ່ງຜູ້ໂດຍສານຢ່າງສະດວກສະບາຍ ລະຫວ່າງແຂວງຕໍ່ແຂວງ ຄືປັດຈຸບັນ, ພຽງແຕ່ເມືອງຕໍ່ເມືອງໃນແຂວງດຽວ ກັນກໍ່ຍັງພົບຄວາມ ຫຍຸ້ງຍາກ.

ໃນປັດຈຸບັນ, ການທ່ອງທ່ຽວພາຍໃນປະເທດເຮົານັບມື້ນັບຂະ ຫຍາຍຕົວໄວ, ທັງໄດ້ສ້າງເງື່ອນໄຂໃຫ້ຄົນຕ່າງປະເທດເຂົ້າມາຢ້ຽມຢາມ ແລະ ທ່ອງທ່ຽວຢ່າງສະດວກສະບາຍຫຼາຍຂຶ້ນຢ່າງຕໍ່ເນື່ອງ, ໃນໄລຍະ 10 ປີ ຜ່ານມາ, ຈຳນວນນັກທ່ອງທ່ຽວຈາກຕ່າງປະເທດໄດ້ເພີ່ມຂຶ້ນໂດຍສະເລ່ຍ

20% ຕໍ່ປີ, ຄືໃນປີ 2000 ມີປະມານ 700.000 ກວ່າຄົນ, ໃນປີ 2008 ມີ 1.700.000 ຄົນ ແລະ ສະເພາະສາມເດືອນຕົ້ນປີ 2009 ນີ້ກໍ່ເພີ່ມຂຶ້ນ 15% ຖ້າທຽບໃສ່ໃນໄລຍະດຽວກັນຂອງປີຜ່ານມາ ທັງໆທີ່ສະພາບເສດຖະກິດຂອງທົ່ວໂລກກໍບໍ່ອຳນວຍຄວາມສະດວກຢູ່ແລ້ວ.

ເຖິງຢ່າງໃດກໍ່ດີ, ພວກເຮົາໝັ້ນໃຈວ່າການທ່ອງທ່ຽວພາຍໃນປະເທດ ເຮົາຍັງຈະຂະຫຍາຍຕົວດີຂຶ້ນຕໍ່ໄປເລື້ອຍໆ, ຖ້າອີງໃສ່ດ້ານຄວາມສະຫງົບ ແລະ ນະໂຍບາຍເປີດກ້ວາງດ້ານການສົ່ງເສີມນະໂຍບາຍ ທ່ອງທ່ຽວແບບອະນຸລັກ ແລະ ສີຊຽວຂອງລັດຖະບານເຮົາ, ຊຶ່ງສະແດງອອກໃນການຮັບເປັນເຈົ້າພາບຈັດກອງປະຊຸມ " ສາກົນກ່ຽວກັບການທ່ອງທ່ຽວແບບອະນຸລັກ ແລະ ການວ່າງສະແດງສີຊຽວ " ໃນວັນທີ 15-18 ກໍລະກົດ 2009 ຜ່ານມານີ້ (World Ecotourism Conference 2009 ).

ໃນໂອກາດດັ່ງກ່າວ, ທ່ານ ບົວສອນ ບຸບຜາວັນ, ນາຍົກລັດຖະມົນຕີແຫ່ງ ສປປ ລາວ ພວກເຮົາກໍ່ໄດ້ໃຫ້ກຽດເຂົ້າຮ່ວມໃນພິທີເປີດ ແລະ ໄດ້ກ່າວຢ່າງໜັກແໜ້ນວ່າ : " ກອງປະຊຸມສາກົນເທື່ອນີ້ຈະເປັນປະສົບການ ແລະ ບົດຮຽນອັນມີຄ່າກ່ຽວກັບການທ່ອງທ່ຽວແບບອະນຸລັກ ແລະ ການວາງສະແດງ ສີຊຽວຢູ່ປະເທດເຮົາ. ຍ້ອນວ່າການທ່ອງທ່ຽວແບບນີ້ ຈະເປັນການປຸກລະດົມໃຫ້ເກີດການມີສ່ວນຮ່ວມຂອງປະຊາຊົນບັນດາເຜົ່າ ຢູ່ກັບທ້ອງຖິ່ນເອງຫຼາຍຂຶ້ນ ທັງທາງດ້ານການສ້າງງານ, ສ້າງລາຍໄດ້ໃຫ້ປະຊາຊົນໃນທ້ອງຖິ່ນ ແລະ ດ້ານການຮຽນຮູ້ວິທີປົກປັກຮັກສາສິ່ງແວດລ້ອມຂອງທ້ອງຖິ່ນໃຫ້ສະອາດງາມຕາໄປພ້ອມໆກັນ ".

ປື້ມ " ເມືອງໂຂງໃນອະດີດ ແລະ ປັດຈຸບັນ ຫຼື ເຂດມະຫານະທີ ສີພັນດອນ " ເຫຼັ້ມນີ້ເຫັນວ່າສອດຄ່ອງເປັນຢ່າງດີ ເພື່ອປຸກລະດົມແນວຄິດຮັກຊາດ, ແນວຄິດຮັກທ້ອງຖິ່ນດິນນາຊຶ່ງເປັນບ້ານເກີດເມືອງນອນຂອງຕົນ

ລວມທັງໃນອະດີດ ແລະ ປັດຈຸບັນ, ທັງໄດ້ຊີ້ໃຫ້ເຫັນຄວາມສຳຄັນຂອງພູມປັນຍາຊາວບ້ານ, ຜົນປະໂຫຍດທີ່ຕ້ອງໄດ້ຮັກສາວັດວາອາຮາມອັນເກົ່າແກ່ ແລະ ຄວາມສວຍງາມຂອງທຳມະຊາດ ພ້ອມທັງອາກາດອັນສົດໃສທີ່ຫາໄດ້ຍາກຊຶ່ງເຮົາຕ້ອງຫວງແຫນໃຫ້ເປັນມໍລະດົກສືບທອດໃຫ້ເຫັນເຊັ່ນລູກເຊັ່ນຫຼານ ເພື່ອໄດ້ຮັບຊາບຮັບຊົມ, ເພື່ອໃຫ້ມີຄວາມທະນົງໃຈເປັນເຈົ້າຂອງປະເທດຊາດຕະຫຼອດໄປ.

ໃນນາມອົງການທ່ອງທ່ຽວແຫ່ງຊາດ, ພວກເຮົາຂໍສະແດງຄວາມຊົມເຊີຍຢ່າງຈິງໃຈຕໍ່ບັນດາຜູ້ອາວຸໂສຂອງທ້ອງຖິ່ນເມືອງໂຂງ ທີ່ມີຫົວຄິດປະດິດຄິດສ້າງ ຮ່ວມແຮງຮ່ວມໃຈກັນອອກແຮງທາງດ້ານສະຕິປັນຍາ, ສ້າງແນວຄວາມຄິດທີ່ດີ ຂຽນປຶ້ມເຫຼັ້ມນີ້ອອກໄວ້ໃຫ້ລູກຫຼານໄດ້ອ່ານ ພ້ອມທັງເປັນປະໂຫຍດອັນສູງຕໍ່ການທ່ອງທ່ຽວແບບອະນຸລັກທຳມະຊາດ-ວັດທະນະທຳຂອງທ້ອງຖິ່ນ ແລະ ປະຫວັດສາດຂອງຊາດລາວ.

ອົງການທ່ອງທ່ຽວແຫ່ງຊາດ ຄິດວ່າປຶ້ມຫົວນີ້ບໍ່ພຽງແຕ່ເປັນການສົ່ງເສີມການທ່ອງທ່ຽວຂອງທ້ອງຖິ່ນໃນແຂວງຈຳປາສັກ, ເວົ້າລວມ ແລະ ເມືອງໂຂງ, ເວົ້າສະເພາະ, ເທົ່ານັ້ນ; ແຕ່ຍັງສາມາດເປັນຕົວແບບໜຶ່ງເຮັດໃຫ້ທ້ອງຖິ່ນອື່ນໄດ້ນຳເອົາໄປພິຈາລະນາເປັນບົດຮຽນອັນດີໄດ້ອີກຕໍ່ໆໄປ.

ສົມພົງ ມົງຄົນວິໄລ

ລັດຖະມົນຕີ, ປະທານອົງການທ່ອງທ່ຽວແຫ່ງຊາດ

# ຄໍານໍາຂອງຜູ້ຈັດພິມ

ການພັດທະນາປະເທດຊາດຂອງພວກເຮົາ, ເຖິງວ່າຍັງບໍ່ທັນໂລ່ງ ຫຼຸ່ງນໄປໄດ້ດີໝົດທຸກດ້ານ, ແຕ່ກໍສາມາດຕີລາຄາໄດ້ວ່າເປັນໄປຕາມຂະບວນການຂອງໂລກໄດ້ແດ່ແລ້ວ ໃນປັດຈຸບັນ, ຖ້າປຽບໃສ່ໃນອະດີດ. ຕົວຢ່າງໃຜໆກໍຄົງຍອມຮັບໄດ້ວ່າ ເຮົາມີຄວາມສະຫງົບທົ່ວປະເທດໄດ້, ເພາະວ່າ ການເດີນທາງໄປມາຫາສູ່ກັນຂອງປະຊາຊົນບັນດາເຜົ່າກໍນັບມື້ນັບໄດ້ຮັບຄວາມສະດວກສະບາຍຂຶ້ນທັງທາງກາຍ ແລະ ທາງໃຈ. ທາງກາຍກໍໝາຍເຖິງການບໍລິການຂົນສົ່ງຢ່າງທົ່ວເຖິງທຸກທິດທຸກທາງ. ທາງໃຈກໍໝາຍເຖິງບໍ່ມີການກີດກັນຈິດໃຈຂອງຜູ້ເດີນທາງ, ບໍ່ມີໃຜຖືກກວດ, ຖືກຖາມຖ້າໄປດີມາດີຕາມລະບຽບຂອງບ້ານເມືອງ. ບໍ່ວ່າແຕ່ຄົນພາຍໃນປະເທດທີ່ໄດ້ຮັບຄວາມສະດວກສະບາຍ, ຄົນຕ່າງປະເທດກໍເຂົ້າມາຢ້ຽມຢາມທ່ອງທ່ຽວນັບມື້ນັບຫຼາຍຂຶ້ນ. ໃນໄລຍະໃໝ່ໆນີ້, ອົງການທ່ອງທ່ຽວແຫ່ງຊາດກໍໄດ້ແຈ້ງໃຫ້ຊາບວ່າ ຈໍານວນນັກທ່ອງທ່ຽວເຂົ້າປະເທດເຮົາໄດ້ເພີ້ມຂຶ້ນ 15 ຫາ 20 % ແຕ່ລະປີ ດັ່ງຕົວເລກຂອງສະຖິຕິໃນປີ 2004 ມີ 894,806 ຄົນ, ຄິດໄລ່ລາຍໄດ້ເຂົ້າປະເທດປະມານ 120 ລ້ານໂດລາສະຫະລັດ, ປີ 2008 ມີ 1,736,787 ຄົນ, ຄິດໄລ່ລາຍໄດ້ເຂົ້າປະເທດປະມານ 275 ລ້ານໂດລາສະຫະລັດ.

ສິ່ງທີ່ພົ້ນເດັ່ນຂຶ້ນຢ່າງຊັດເຈນອີກກໍຄືດ້ານແນວຄິດຂອງປະຊາຊົນບັນດາເຜົ່າ, ມັນສະແດງອອກໃນຄວາມມີປະຊາທິປະໄຕອັນເໝາະສົມໃນດ້ານການສື່ສານດີຂຶ້ນ, ນັບແຕ່ປະເທດເຮົາໄດ້ເຂົ້າເປັນສະມາຊິກອາຊຽນ, ໜັງສືພິມຂ່າວສານ, ປຶ້ມຕ່າງໆ ຫຼື ໜັງສືແບບຮຽນຂອງຕ່າງປະເທດ ແລະຂອງພາຍໃນປະເທດ ກໍໄດ້ພິມອອກຫຼາຍກວ່າແຕ່ກ່ອນຫຼາຍເທົ່າ, ວິທະຍາ

ສານ ແບບທັນສະໄໝ ເປັນພາສາລາວ ກັບພາສາອັງກິດ ກໍມີເນື້ອໃນດີ ແລະ ຕົກແຕ່ງສວຍສົດງົດງາມໜ້າອ່ານ, ເຖິງວ່າລາຄາຍັງຢາກແພງແດ່, ກໍເຫັນວ່າຍັງມີຄົນຈອງອ່ານກັນເປັນປົກກະຕິ. ໝາຍຄວາມວ່າຄົນລາວເລີ່ມສົນໃຈອ່ານຫຼາຍຂຶ້ນ ແລະ ຜູ້ຂຽນກໍພະຍາຍາມຄົ້ນຄວ້າຂຽນບົດໄດ້ຢ່າງເປັນປົກກະຕິ, ທັງມີການແຂ່ງຂັນກັນເພື່ອກ້າວຂຶ້ນຕາມຍຸກສະໄໝ ແລະ ຕາມຂະບວນການຂອງການພັດທະນາແນວຄິດຂອງສິ່ມວນຊົນໄດ້ດີກວ່າແຕ່ກ່ອນ. ເຮົາເຄີຍສັງເກດ, ຢູ່ຕ່າງປະເທດ, ຮ້ານຂາຍປຶ້ມ (Bookshop) ຕາມແຄມທາງມີຫຼາຍ ແລະ ປຶ້ມຂາຍດີ, ແມ່ນສັນຍານວ່າປະເທດນັ້ນມີຄວາມຈະເລີນໄດ້. ມີບາງປະເທດ, ຮ້ານຂາຍປຶ້ມເຂົາບໍ່ພຽງແຕ່ມີຄົນເຂົ້າຊື້ອ່ານຫຼາຍ, ເຈົ້າຂອງຮ້ານ ຍັງໄດ້ຈັດຫາຫ້ອງນັ່ງອ່ານ ທັງໃຫ້ຜູ້ໃຫຍ່ ແລະ ເດັກນ້ອຍໄດ້ຮັບບໍລິການເປັນຢ່າງດີທີ່ສຸດ, ເຖິງວ່າຈະບໍ່ໄດ້ກຳໄລຍ້ອນ, ເຂົາກໍສາມາດຫາວິທີອື່ນຖົມຊຸມທຶນເຂົາໄດ້ເຊັ່ນເຂົາໄດ້ຈັດໃຫ້ມີສະຖານທີ່ຂາຍເຂົ້າໜົມ ຫຼື ກາເຟ ທີ່ສະອາດດີ ນຳອີກຢູ່ພາຍໃນຮ້ານຂາຍປຶ້ມ.

ເມື່ອເວົ້າເຖິງຄວາມສະດວກໃນການສົ່ງເສີມການອ່ານ ແລະ ການພິມປຶ້ມຕ່າງໆໃນສັງຄົມເມືອງຄືແນວນີ້ ດີຂຶ້ນຢູ່ປະເທດເຮົາ, ແຕ່ກໍຍັງຢາກຍົກຂໍ້ສັງເກດໃຫ້ເຫັນວ່າ ຮ້ານຂາຍປຶ້ມຂອງລັດ ຍັງມີຈຸດອ່ອນໃນດ້ານ ບໍລິການລູກຄ້າຫຼາຍ ຖ້າປຽບໃສ່ຮ້ານຂອງເອກະຊົນ, ແທນທີ່ຈະມີຜູ້ເຂົ້າມາຮັບບໍລິການຫຼາຍພັດແມ່ນຜູ້ມານັ່ງຂາຍຫຼາຍກວ່າຜູ້ເຂົ້າມາຊື້, ບໍ່ພຽງແຕ່ຄົນຂາຍ ຫຼາຍກວ່າຄົນຊື້ເທົ່ານັ້ນ ແຕ່ຍັງເຫັນວ່າຜູ້ຂາຍບໍ່ມັກສົນໃຈ ນຳຜູ້ເຂົ້າມາຮັບບໍລິການອີກຊ້ຳ, ເວົ້າລວມແລ້ວ, ເຮົາສັງເກດເຫັນວ່າບ່ອນໃດ ທີ່ເປັນຂອງລັດບໍລິການບ່ອນນັ້ນຢາກມີທ່າງຽບເຫງົາ, ຄົນບໍ່ມັກເຂົ້າຖາມ, ຄວນຊອກຫາເຫດຜົນຖ້າວ່າຂໍ້ສັງເກດຂອງເຮົາຫາກຖືກແທ້,ຈະເປັນໄປໄດ້ບໍ່ ຖ້າຕີລາຄາວ່າ, ການຄິດໄລ່ທຸລະກິດບໍ່ທັນສູງ, ຫຼືວ່າບໍ່ຄິດໄລ່ຊ້ຳ ?

ບາງຄັ້ງຄາວ, ຖ້າຈຳແນກເລິກເຂົ້າໄປອີກ, ກຳໄລທີ່ຄິດເອົາຈາກລາຄາປື້ມນັ້ນອາດບໍ່ພໍເທົ່າໃດສຳລັບຜູ້ຄົ້ນຄວ້າຂຽນ ຫຼື ຜູ້ພິມ; ສະນັ້ນແມ່ນເປັນໄປໄດ້ບໍທີ່ຈະເຂົ້າໃຈວ່າປື້ມ ຫຼື ໜັງສືພິມ, ວາລະສານຕ່າງໆ ບໍ່ແຜ່ໄປເຖິງເຂດຊົນນະບົດໄດ້ດີຍ້ອນຄົນບໍ່ມັກອ່ານ ຫຼື ຕີລາຄາແພງໂພດ?, ເຮົາຄິດວ່າ, ຖ້າເອກະສານແນວທາງຕ່າງໆ ຫາກເຖິງມືປະຊາຊົນຫຼາຍ, ອາດຈະມີຜູ້ອ່ານຫຼາຍຂຶ້ນໄດ້ ແທນທີ່ຈະຕ້ອງໄດ້ເຜີຍແຜ່ຢູ່ຕາມວັດໂດຍການຈັດຕັ້ງ ບ້ານຊຶ່ງສ່ວນໃຫຍ່ບໍ່ມີໃຜຢາກໄປຟັງ. ເຄີຍມີອົງກອນ ຫຼື ໜ່ວຍງານໃດຂອງລັດໄດ້ຄົ້ນຄວ້າບັນຫາ "ການເຜີຍແຜ່ ແນວທາງນະໂຍບາຍ " ຂອງຂັ້ນເທິງດ້ວຍວິທີອື່ນທີ່ອາດມີປະສິດທິຜົນ ກວ່າເກົ່າແດ່ບໍນັບແຕ່ 30 ປີມານີ້, ຫຼື ຍັງຖືວ່າການເຜີຍແຜ່ຕາມບ້ານນີ້ໄດ້ ຜົນດີທີ່ສຸດແລ້ວ?.

ສຳລັບປື້ມ "ເມືອງໄຊ, ໃນອະດີດ ແລະ ປັດຈຸບັນ " ທີ່ຜູ້ອະວຸໂສເມືອງໄຊ ໄດ້ອອກແຮງຮ່ວມກັນຂຽນ ແລະ ພິມອອກໄດ້ນີ້ ກໍແມ່ນເປັນການສູ້ຊົນສູງສົມຄວນແລ້ວ. ໃນເບື້ອງຕົ້ນເກືອບຈະຍອມຈຳນົນ, ເພາະຜູ້ອະວຸໂສ ສ່ວນໃຫຍ່ແມ່ນເວົ້າໄດ້ແຕ່ຂຽນບໍ່ໄດ້ແລ້ວ. ຜູ້ທີ່ພໍຂຽນໄດ້ພັດບໍ່ຮູ້ຄົ້ນຄ້ວາ, ບໍ່ສົນໃຈຈະຄົ້ນຄວ້າອີກ. ເມື່ອບຸກບືນເຮັດມາໄດ້ເຖິງຂະໜາດນີ້, ຈຶ່ງເຂົ້າໃຈວ່າຕ້ອງໄດ້ສູ້ຫຼາຍໆດ້ານ ຈຶ່ງພໍເປັນໄປ; ແຕ່ກໍຍັງບໍ່ທັນແນ່ວ່າຈະສະດວກເມື່ອໜ້າຫຼືບໍ່. ສູ້ດ້ານທີ່ໜຶ່ງແມ່ນຕ້ອງໃຫ້ຜູ້ອ່ານເຫັນຄວາມສຳຄັນ ແລະ ຄວາມຈຳເປັນທີ່ຈະຕ້ອງເຮັດໃຫ້ຊຸມຊົນຂອງທ້ອງຖິ່ນຮັກ ແລະ ຫວງແຫນ ບ້ານເກີດເມືອງນອນຂອງຕົນຢ່າງເລິກເຊິ່ງ, ຈຶ່ງສາມາດເປັນເຈົ້າຕົນເອງ ຢ່າງຖືກຕ້ອງໄດ້.

ສູ້ດ້ານທີສອງແມ່ນຕ້ອງໄດ້ເຊື່ອໝັ້ນວ່າຈະບໍ່ຜິດຕໍ່ແນວທາງຂອງພັກ ແລະ ລັດຖະບານ ເວລາເຮົາປຸກລະດົມໃຫ້ຄົນໃນທ້ອງຖິ່ນເຂົ້າໃຈຢ່າງຖືກຕ້ອງຕໍ່ຜົນປະໂຫຍດຂອງປະເທດຊາດສູງກວ່າຂອງສ່ວນບຸກຄົນ.

ສູ້ດ້ານທີ່ສາມແມ່ນຕ້ອງແນ່ໃຈວ່າຈະພໍຫາທຶນມາພິມ ແລະ ເຜີຍແຜ່ ປື້ມອ່ານປະເພດທີ່ເຫັນວ່າ ຈະສາມາດປູກຄວາມຮັກຊາດ, ຮັກທ້ອງຖິ່ນດິນ ນາທີ່ເປັນມໍລະດົກຂອງຊາດນີ້ໃຫ້ໄດ້.

ທັງໝົດນີ້ເປັນວຽກທີ່ບໍ່ເຄີຍພົບເຫັນຜູ້ອື່ນໄດ້ເຮັດມາກ່ອນ ເພື່ອຊ່ວຍລັດຖະບານ ແລະ ເປັນວຽກທີ່ທ້າທາຍສົມຄວນທັງເປັນຜົນດີໃຫ້ແກ່ການສ້າງແນວຄິດຊາດ ແນວຄິດເປັນເຈົ້າຕົນເອງຂອງປະຊາຊົນ.

ເຖິງວ່າຈະທ້າທາຍຂະໜາດໃດກໍຕາມ, ຜູ້ຈັດພິມປື້ມຫົວນີ້ມີຄວາມພາກພູມໃຈທີ່ສຸດໃນການປະກອບສ່ວນຂອງຜູ້ພິມ ແລະ ຜູ້ຊອກທຶນຊ່ວຍເຫຼືອໃຫ້ສາມາດອອກສູ່ສາຍຕາຂອງຜູ້ອ່ານໄດ້. ເຮົາຈຶ່ງຖືວ່າເປັນຜົນງານລວມຂອງທຸກຄົນທີ່ປະກອບສ່ວນໃຫ້ປື້ມຫົວນີ້ອອກໃຫ້ໄດ້ອ່ານ ແລະ ໄດ້ຄວາມຮູ້ຍ້ອນເປັນຢ່າງດີ.

ຈຶ່ງຂໍຖືໂອກາດນີ້ຂອບອົກຂອບໃຈຕໍ່ຜູ້ຮ່ວມຂຽນບົດຊ່ວຍລ້າໆ, ຜູ້ອອກແຮງຊ່ວຍກວດ, ແລະ ຜູ້ຊ່ວຍທາງດ້ານລົງທຶນພິມທຸກໆທ່ານໃນທີ່ນີ້. ຂໍຈົ່ງໄດ້ຮັບຄວາມຮັກແພງຈາກຂ້າພະເຈົ້າທີ່ເປັນຜູ້ບຸກເບີກດ້ວຍ.

ວຽງຈັນ, 2 ພະຈິກ 2009

ຄຳເພົາ ພອນແກ້ວ

# ສາລະບານ

ໜ້າ/ຫຼື

1. ຄຳນຳຂອງອົງການທ່ອງທ່ຽວແຫ່ງຊາດ....................ກ-ຄ

2. ຄຳນຳຂອງຜູ້ຈັດພິມ....................ງ-ຊ

## ພາກທີ I ເມືອງໂຂງໃນອະດີດ

1. ບົດນຳສະເໜີໂດຍ ຄຳເພົາ ພອນແກ້ວ....................1

2. ປະຫັວດສາດ ແລະ ຄວາມສຳຄັນຂອງຊາດ....................22

3. ປະຫວັດສາດ ແລະ ຄວາມສຳຄັນຂອງທ້ອງຖິ່ນ....................27

4. ປະຫວັດສາດ ແຂວງ ຈຳປາສັກ....................37

5. ຊີວະປະຫັວດຫຍໍ້ຂອງ ອາຈານມະຫາແກ້ວ....................87

6. ບາງຄຳກອນຂອງ ອາຈານ ມະຫາແກ້ວ....................94

7. ວັດທະນະທຳທາງປະເພນີຂອງຊາວເມືອງໂຂງ (ມະຫາ ສີສະເຫວີຍ ສຸວັນນີ)....................107

8. ຄຳກອນ ຂອງ ທ່ານ ໜູທັກ ສິດທິມໍລະດາ....................144

9. ປະຫວັດຫຍໍ້ດອນໂຂງ ແລະ ຄຳກອນສຳຄັນ....................152

10. ກອນຄອນພະເພງ ຂອງ ພະຍາ ອຸເທນ....................155

11. ບົດຄວາມ:ປະຫັວດການສ້າງທາງລົດໄຟ ທາງຄອນ-ດອນເດດ....................175

12. ຕົ້ນສະບັບ: ຕົ້ນສະບັບເປັນ ພາສາຝຣັ່ງເສດ....................188

## ພາກທີ II ເມືອງໂຂງໃນປັດຈຸບັນ

1. ບາງທັດສະນະຕໍ່ການພັດທະນາດອນໂຂງ ຕາມໂຄງການ “ 2 ສ.” ສີຂຽວ ແລະ ສະອາດ....................195-202

2. ພູມີສາດທ້ອງຖິ່ນ ເມືອງໂຂງ..............................210-219
3. ຄວາມຮູ້ສຶກເມື່ອກັບບ້ານເກົ່າ..................................220-232
4. ວັດເກົ່າສຳຄັນທີ່ຄວນຮູ້ ໃນດອນໂຂງ........................233-246
5. ພູມປັນຍາຊາວບ້ານ ໃນດອນໂຂງ..................................247
   ກ. ວິທີເຮັດນ້ຳຕານກ້ອນ. ບ້ານຫີນສິ່ວ.................. 248
   ຂ. ວິທີເຮັດປາເຄັມປາສ້ອຍໄຂ່-ບ້ານຄອນ.............253
   ຄ. ວິທີເຮັດປາກະເຕົາ (ບ້ານຄອນ).......................253
   ງ. ວິທີເຮັດປາຈາວ (ບ້ານຄອນ-ດອນເດດ).............254
   ຈ. ວິທີຊຽນໃບລານ (ບ້ານຫີນສິ່ວ).......................255
   ສ. ວິທີເຮັດໂຕ່ງຂອງຄົນບູຮານ-ຊາວເມືອງໂຂງ.......256
6. ການສຶກສາ ຂໍ້ຄິດເບື້ອງຕົ້ນໃນການສອນ
   ແລະ ການຮຽນທີ່ເນັ້ນ "ຂະບວນການ"......................260-265
7. ການສຶກສາໃນອະດີດ ແລະ ປັດຈຸບັນຢູ່ເມືອງໂຂງ.........266-281
8. ບັນຫາການໃຊ້ສັບໃນ ພາສາລາວ ..........................282-291
9. ປະຫວັດຫຍໍ້ ຂອງ ນະຄອນລັດ, ກາລະຈຳບາກນາຄະບູຣີສີ
   (ນະຄອນຈຳປາສັກ).................................................292-303
10. ຄວາມເປັນມາຂອງຄຳວ່າລຳສີພັນດອນ, ສີທັນດອນ
   ຫຼື ລຳໄຕ້.....................................................................304-312

# ພາກ I

# ເມືອງໄຊໃນອະດີດ

# ເມືອງໂຂງ
# ໃນອະດີດ ແລະ ປັດຈຸບັນ

*" ເມືອງໂຂງ ຖິ່ນຕຳນານ, ສຽງລຳສີພັນດອນ ຄອນພະເພັງລືຊ່າ,*
*ຊົມປາຂ່າ ທາງຄອນ, ນ້ຳຕານກ້ອນ ຫອມຫວານ ບ້ານຫີນສື່ວ,*
*ຊົມທິວທັດ ໝູ່ເກາະດອນ, ກິນກ້ອຍປາພອນ ເມືອງໂຂງ "*

**ໂດຍ : ຄະນະອາວຸໂສ**
**" ເມືອງໂຂງ "**

## 1. ບົດນຳ

ສະເໜີໂດຍ ທ່ານ ຄຳເພົາ ພອນແກ້ວ

### 1.1 ຄວາມເປັນມາຂອງໂຄງການຂຽນປຶ້ມເລື່ອງ ເມືອງໂຂງ

ໃນເບື້ອງຕົ້ນ, ເວລາຄິດຂຶ້ນຢາກຂຽນເລື່ອງ ເມືອງໂຂງ, ກໍຄິດແຕ່ພຽງວ່າ ຢາກໃຫ້ເດັກຮຸ່ນໃໝ່ຂອງທ້ອງຖິ່ນສຳນຶກໄດ້, ຄວາມຮັກ ແລະ ຄວາມຫວງແຫນບ້ານເກີດເມືອງນອນຂອງຕົນເອງເທົ່ານັ້ນ; ແຕ່ຫຼັງຈາກກາລະເວລາຜ່ານໄປເລື້ອຍໆ, ເຫດການຕ່າງໆຂອງໂລກ ແລະ ຂອງໝົດປະເທດຊາດໄດ້ໝູນວຽນປ່ຽນໄປ, ຈຶ່ງເຮັດໃຫ້ຜູ້ຂຽນໄດ້ຄົ້ນຄິດຢາກຂຽນຫຼາຍສິ່ງຫຼາຍຢ່າງກ້ວາງຂວາງອອກຈາກແນວຄວາມຄິດເດີມ.

ສາເຫດທີໜຶ່ງ, ບັດນີ້ບໍ່ພຽງແຕ່ຢາກໃຫ້ເດັກຮູ້ຮັກທ້ອງຖິ່ນເດີມຂອງຕົນເອງເທົ່ານັ້ນ, ແຕ່ສິ່ງສຳຄັນໃນທີ່ນີ້ ແມ່ນຕ້ອງຮູ້ປະຫວັດສາດຂອງທ້ອງຖິ່ນຢ່າງລະອຽດສົມຄວນ ເພື່ອຈະເຂົ້າໃຈ ແລະ ສຳນຶກອອກໄດ້ວ່າ ທ້ອງຖິ່ນຂອງເຂົານັ້ນມີຄວາມເປັນມາຄືແນວໃດ ຈຶ່ງຕົກຢູ່ໃນສ່ວນໜຶ່ງຂອງປະເທດລາວໃນປັດຈຸບັນໄດ້, ເພາະມັນອາດຕົກໄປເປັນສ່ວນໜຶ່ງຂອງປະເທດ

ກຳປູເຈຍ ຫຼື ປະເທດໄທກໍເປັນໄດ້. ແຕ່ເປັນຫຍັງຈຶ່ງຕົກຢູ່ໃນ ແຂວງໜຶ່ງຂອງປະເທດລາວ ຄືແຂວງ ຈຳປາສັກ, ນັບຕັ້ງແຕ່ໄດ້ເປັນປະເທດທົ່ວເມືອງຂຶ້ນຂອງຝຣັ່ງເສດເປັນຕົ້ນມາ?

ສາເຫດທີສອງ, ທີ່ພາໃຫ້ຢາກຂຽນເລື່ອງເມືອງໂຂງແມ່ນ ຫຼັງຈາກຜູ້ຂຽນໄດ້ຮູ້ໄດ້ເຫັນໝົດທຸກແຂວງຂອງປະເທດລາວ, ຄຳຖາມທີ່ຍົກຂຶ້ນມາຖາມຕົນເອງກໍຄື " ເປັນຫຍັງເມືອງນ້ອຍໆຄືເມືອງໂຂງ ຈຶ່ງມີເອກະລັກຂອງຄວາມເປັນລາວສູງເດັ່ນຂຶ້ນຢູ່ໃນລະດັບຊາດໄດ້ ? " ເພາະເຫັນວ່າ ມີລູກເມືອງໂຂງບໍ່ແມ່ນໜ້ອຍ ທີ່ໄດ້ເປັນລັດຖະມົນຕີຂອງລັດຖະບານເລື້ອຍໆມາໃນລະບອບເກົ່າ ທັງມີນາຍທະຫານຮອດຂັ້ນນາຍພັນ, ນາຍພົນກໍຫຼາຍສົມຄວນໃນລະບອບລ່າເມືອງຂຶ້ນແບບເກົ່າ ແລະ ລ່າເມືອງຂຶ້ນແບບໃໝ່ຂອງປະເທດ. ພ້ອມກັນນັ້ນ, ກໍມີຮອດນາຍພົນ, ນາຍພັນຫຼາຍສົມຄວນທີ່ອອກໄປຕໍ່ຕ້ານລະບອບລ່າເມືອງຂຶ້ນ, ຈົນຮອດໄລຍະປະຕິວັດຊາດ ປະຊາທິປະໄຕ ແລະ ຈົນປົດປ່ອຍທົ່ວປະເທດແລ້ວ, " ລູກເມືອງໂຂງ " ກໍຍັງມີຈຳນວນບໍ່ໜ້ອຍປະກອບຢູ່ໃນຄະນະລັດຖະບານ ຂອງລະບອບໃໝ່ ຈົນເທົ່າປັດຈຸບັນບໍ່ພຽງແຕ່ຢູ່ໃນຄະນະລັດຖະບານເທົ່ານັ້ນ, ແຕ່ຍັງມີຈຳນວນໜຶ່ງທີ່ເປັນສູນກາງ, ກົມການເມືອງ ແລະ ເປັນຮອດປະທານປະເທດໄດ້ອີກ.

ສາເຫດທີສາມ, ຄືຢາກຮູ້ວ່າໃນບັນດາຂອງກຳລັງແຮງ ຂອງຊັບພະຍາກອນມະນຸດຂອງປະເທດ, ສ່ວນໜຶ່ງກໍແມ່ນລູກເມືອງໂຂງຢູ່ແລ້ວ; ດັ່ງໄດ້ກ່າວມາ; ແຕ່ຍັງມີອີກສ່ວນໜຶ່ງຂອງປະຊາກອນເຫຼົ່ານັ້ນ ທີ່ເປັນພະລັງແຮງອັນບົ່ງບອກເຖິງຄວາມເປັນລາວດັ້ງເດີມ, ລາວທີ່ປອດໃສ, ລາວທີ່ນັບຖືຮີດຄອງປະເພນີຂອງຊາດໄວ້ໄດ້ຢ່າງບໍ່ຮູ້ສຶກຕົວ. ປະຊາກອນທີ່ກ່າວນີ້ຄືອະດີດນັກບວດ, ຊຶ່ງສັງຄົມລາວອາດຫຼົງລືມໄປເປັນບາງຄັ້ງບາງຄາວ; ແຕ່ເມື່ອເພິ່ນສິກອອກມາກໍໄດ້ " ມະຫາ " ທີ່ເປັນສ່ວນໜຶ່ງສຳຄັນຂອງຊັບພະຍາ

ກອນມະນຸດຂອງຊາດ. ຫຼາຍໆທ່ານທີ່ຍັງໄດ້ປະກອບສ່ວນໃນການຕໍ່ສູ້ຍາດເອົາໄຊຊະນະມາໃຫ້ຄວາມເປັນລາວໄດ້, ທັງໄດ້ເປັນນັກກະວີ, ນັກປັດຊະຍາທ້ອງຖິ່ນ, ໝໍລຳ, ໝໍແຄນ ແລະ " ລຳສີພັນດອນ " ກໍເຮັດໃຫ້ໂດ່ງດັງໄປທົ່ວປະເທດ ແລະ ທົ່ວໂລກໄດ້ອີກ. ໃນຈຳນວນ " ມະຫາ " ທັງຫຼາຍ, ຂໍສະຫງວນຊື່ຂອງພວກເພິ່ນໄວ້ກ່ອນໃນຕອນນີ້; ແຕ່ໃນນັ້ນ, ສະຫງວນບໍ່ໄດ້ແທ້ໆ, ແມ່ນ " ທ່ານ ມະຫາແກ້ວ " ບ້ານ ຫົວໂຂງພະໃຫຍ່ ຂອງຊາວເມືອງໂຂງ, ທັງເປັນນັກກະວີຂອງລາວທີ່ໄດ້ແຕ່ງບົດ " ເລື່ອງດອກເກດ, (1) ເລື່ອງນົກສາລິກາ " ແລະ ເລື່ອງອື່ນໆເຂົ້າໃສ່ໃນປຶ້ມແບບຮຽນຊັ້ນປະຖົມສຶກສາຂອງຊາດໃນສະໄໝຕົກຢູ່ໃນຄວາມປົກຄອງຂອງຝຣັ່ງເສດຮ່ວມກັບໝົດປະເທດອິນດູຈີນ. ເນື້ອເລື່ອງຂອງບົດກອນຕ່າງໆເຫຼົ່ານັ້ນ ແມ່ນລຶບອອກຈາກຄວາມຊົງຈຳຂອງຄົນລາວບໍ່ໄດ້ເດັດຂາດ. ຄົນລາວຜູ້ທີ່ມີອາຍຸໃນປັດຈຸບັນຢ່າງນ້ອຍ 60 ປີຂຶ້ນໄປ ບໍ່ມີຜູ້ໃດທີ່ຈະບໍ່ໄດ້ຮຽນບົດກອນເຫຼົ່ານີ້, ລູກລາວຫຼານລາວເກືອບວ່າທຸກຄົນໃນທົ່ວປະເທດ, ຍ້ອນໄດ້ຮຽນຢູ່ໂຮງຮຽນປະຖົມກ່ອນສົງຄາມໂລກຄັ້ງທີ ສອງ ( 1945 ), ຕ້ອງໄດ້ຮູ້ໄດ້ເຫັນບົດຂອງທ່ານມະຫາແກ້ວ ຢ່າງບໍ່ສົງໄສ.

ນອກຈາກສາມສາເຫດຫຼັກໆ ທີ່ສະທ້ອນໃຫ້ເຫັນຄວາມງາມຂອງເມືອງໂຂງ ຫຼື " ສີພັນດອນ " ຂ້າງເທິງນີ້, ຍັງມີອີກຫຼາຍໆສາເຫດທີ່ຊຸກຍູ້ໃຫ້ຜູ້ຂຽນຕ້ອງການຢາກຂຽນ " ເລື່ອງເມືອງໂຂງ ". ສາເຫດຕ່າງໆເຫຼົ່ານີ້ຈະເກັບມາໄລ່ໃຫ້ຄົບຖ້ວນໃນທີ່ນີ້ໂລດແມ່ນເປັນໄປບໍ່ໄດ້. ເຖິງຢ່າງໃດກໍ່ຕາມ, ຜູ້ຂຽນຂໍຍົກເອົາ ທ່ານ ອາຈານ ມະຫາ ກຸ ສຸວັນນະເມທີ, ໃນໄລຍະໃໝ່ໆນີ້, ທີ່ໜ້າຍົກຍ້ອງ ແລະ ໜ້ານັບຖືເປັນພິເສດ, ເສຍດາຍທີ່ເພິ່ນໄດ້ເຖິງແກ່ກຳ

---

(1) ບົດ 34. ເລື່ອງ ດອກເກດ. " ອັນທີ່ ດອກເກດຕົ້ນ, ໃບເນື່ອງ ໜາມໜາ, ແຕ່ຫາກ ຄູ່ຄົນ ຍໍຍ້ອງ, ປຽບປານ ຄົນໂສມຊ້າ ຕົນຕົວ ຮູບຊົ່ວ, ແຕ່ຫາກ ໃຈສະຫຼາດຮູ້ ສຸດສົ່ງ ສ່ວນດີ. ອັນທີ່ ດອກເກດນີ້, ກໍຫອມ ແຕ່ຕາມລົມ, ຄົນດີມີ ລືຊາທົ່ວແດນດິນດ້າວ, ໃຜກໍ ຍິນດີດ້ວຍ ໃຈຊົມຊ້ອຍຊື່ນ, ຢາກຮຸ່ງຮູ້ ເຫັນໜ້າ ຢູ່ຊູ່ວັນແທ້ແລ້ວ " (ມະຫາແກ້ວ)

ຈາກພວກເຮົາໄປແລ້ວ, ແຕ່ເພິ່ນເຄີຍສັ່ງໃສ່ຫູຂອງຜູ້ຂຽນເປັນສຽງຄູນເຄືອ ເບົາໆວ່າ " ເປັນແນວໃດ ກໍໃຫ້ຫຼານພະຍາຍາມຂຽນເລື່ອງປະຫວັດເມືອງ ໂຂງໄວ້ໃຫ້ຄົນໄດ້ອ່ານ ແລະ ໄດ້ຮູ້ໄວ້ແທ້ໆ, ເພາະເມືອງໂຂງເປັນເມືອງ ດຽວທີ່ " ຈານ " ໄດ້ເປັນຕົ້ນກຳເນີດຂອງຊາວເມືອງໂຂງ, ກໍວ່າໄດ້. ເພິ່ນ ເປັນລາວຜູ້ທີ່ໄດ້ບວດໄດ້ຮຽນໃນພຸດທະສາສະໜາແທ້ໆ, ແລະ ຖືກທົດສິງ ຈາກປະຊາຊົນ, ອອກມາໄດ້ຕຳແໜ່ງຈານ ( ຊຶ່ງສູງກວ່າທິດ, ກວ່າຊຽງ ) ເພິ່ນສາມາດເປັນເຈົ້າເມືອງໄດ້ໃນເວລາກ່ອນຝຣັ່ງເຂົ້າມາປົກຄອງ. ທ່ານ ເຈົ້າເມືອງຜູ້ນັ້ນຊື່ ຈານຫວດ ແລະ ກໍ່ເປັນກຽດໃຫ້ແກ່ນັກບວດລາວທຸກຄົນ ໃນເວລາຕໍ່ມາ. ນອກນັ້ນທ່ານ ອາຈານ ມະຫາກຸ ຍັງບອກອີກວ່າ ເມືອງໂຂງ ເປັນຈຸດໜຶ່ງທີ່ເຈົ້າຣາຊະຄູ ໂພນສະເມັກ ຫຼື ຜູ້ທີ່ຄົນລາວຮູ້ກັນທົ່ວໄປວ່າ " ພະຄູຂີ້ຫອມ " ໄດ້ພາຍາດໂຍມລົງໄປຈາກວຽງຈັນ ແລະ ໄດ້ຜ່ານມາເພື່ອ ລົງໄປຮອດພະນົມເປັນ ໃນສະໄໝອານາຈັກລາວລ້ານຊ້າງ ກຳລັງກະສັ່ນ ກະສາຍ ຂາດກະສັດຜູ້ສຳຄັນປົກຄອງ, ຫຼັງຈາກ ພະເຈົ້າ ສຸລິຍະວົງສາ ທຳມິກະລາດ ເຖິງແກ່ສະຫວັນນະຄົດແລ້ວໃນປີ ຄ.ສ 1695 ໃນເບື້ອງຕົ້ນ, ພະຄູ ຂີ້ຫອມ ນີ້ເພິ່ນອາດຍັງບໍ່ທັນເຂົ້າໃຈວ່າ ຊາຍແດນລາວລ້ານຊ້າງນັ້ນ ສຸດພຽງໃດ. ເມື່ອພາຍາດໂຍມໄປຮອດພະນົມເປັນ ແລະ ເລີ່ມລົງມືປັບປຸງ ສະຖານທີ່ເພື່ອຫາຢູ່ຫາກິນແບບຖາວອນ ກໍຖືກເຈົ້າແຜ່ນດິນຂອງກຳປູເຈຍ ສະໄໝນັ້ນສັ່ງໃຫ້ທະຫານໄລ່ກັບຄືນ, ຂຶ້ນຕາມລຳແມ່ນ້ຳຂອງມາອີກ, ຈິ່ງ ໄດ້ຕັ້ງເອົາດອນໂຂງ ທີ່ເຫັນວ່າໃຫຍ່ກວ່າໝູ່ເປັນເມືອງ, ທັງໄດ້ແຕ່ງຕັ້ງໃຫ້ ຈານຫວດ ຜູ້ນີ້ເອງເປັນເຈົ້າເມືອງ. ໃນປັດຈຸບັນເພິ່ນສາມາດພິສູດເລື່ອງນີ້ ໄດ້ຍ້ອນ " ຕຳນານ " ເມືອງໂຂງຊຶ່ງທຸກຄົນເລົ່າຕໍ່ປາກກັນ, ທັງຢັ້ງຢືນໄດ້ ຈາກສຽງປາກຂອງຄົນທ້ອງຖິ່ນດຽວກັນຄືປະຊາຊົນບ້ານ ແສນເໜືອ ທີ່ເປັນ ບ້ານໜຶ່ງຂອງດອນໂຂງຕິດກັບບ້ານ ແສນໃຕ້, ແຕ່ປາກສຽງໂໜ້ງຄືສຽງວຽງ

ຈີນ, ສ່ວນຄົນບ້ານ ແສນໃຕ້ ພັດປາກສຽງເມືອງໄຊງຄືໝົດທຸກຄົນໃນເຂດພາກໃຕ້ຂອງລາວ.

ສະຫຼຸບແລ້ວ, ທຸກໆເລື່ອງທີ່ກ່າວມາຂ້າງເທິງນີ້ ລ້ວນແຕ່ເປັນສາເຫດທີ່ເຮັດໃຫ້ເຮົາທຸກຄົນສົນໃຈຕໍ່ປະຫວັດຄວາມເປັນມາຂອງເມືອງໄຊງ. ບໍ່ພຽງແຕ່ " ສົນໃຈ " ແບບຜ່ານໆເທົ່ານັ້ນ, ເມື່ອຫຼາຍໆຄົນໄດ້ໄປສຳພັດດ້ວຍຕົນເອງ ກໍມີຄວາມຕື່ນເຕັ້ນດ້ວຍທຳມະຊາດອັນ " ອອນຊອນ " ຄິດຢາກເປັນນັກປະພັນຂຶ້ນກັບທີ່; ບໍ່ວ່າຄົນລາວ ຫຼື ຄົນຕ່າງດ້າວ, ເມື່ອໄດ້ມາພົບເຫັນດ້ວຍຕາຕົນເອງແລ້ວ ບໍ່ມີຜູ້ໃດທີ່ຈະບໍ່ອອກປາກວ່າ " ຈະຂໍມາໃໝ່ ".

ດັ່ງນັ້ນ, ເຮັດແນວໃດ " ລູກເມືອງໄຊງ " ຜູ້ອາວຸໂສ, ຜູ້ມີບົດຮຽນໃນທ້ອງຖິ່ນ, ຈະບໍ່ຢາກຮ່ວມມືກັນຂຽນ " ເລື່ອງເມືອງໄຊງ " ນີ້ອອກໄວ້ສູ່ລູກສູ່ຫຼານສືບຮູ້ຕໍ່ໄປຢ່າງລະອຽດຂຶ້ນເລື້ອຍໆໄດ້.

## 1.2 ຈຸດປະສົງ ແລະ ເປົ້າໝາຍ

ຈຸດປະສົງຫຼັກໆໃນການຂຽນເລື່ອງ " ເມືອງໄຊງ " ນີ້ກໍເພື່ອ:

- ຢາກໃຫ້ລູກຫຼານລຸນໃໝ່ຂອງຊາວເມືອງໄຊງ ສາມາດມີປື້ມບ້ານຕົນອ່ານ ເພື່ອປະດັບຄວາມຮູ້ອັນແນ່ນອນຂອງບ້ານເກີດຂອງຕົນເອງ. ເວລາເພິ່ນເລົ່າເລື່ອງເມືອງໄຊງໃຫ້ຕົນຟັງກໍພໍເຂົ້າໃຈໄດ້ດີກວ່າເກົ່າ ຫຼື ພໍມີພື້ນຖານສາມາດຕອບຄຳຖາມໃຫ້ຜູ້ອື່ນ ທີ່ສົນໃຈກ່ຽວກັບທຸກໆເລື່ອງທີ່ກ່ຽວຂ້ອງກັບບ້ານເກີດເມືອງນອນຂອງຕົນໃຫ້ໄດ້. **ຕົວຢ່າງ** ຄົນມັກຖາມເຖິງຊື່ຂອງ " ສີທັນ ດອນ " ຫຼື " ສີພັນດອນ ". ຄວາມຈິງ, ທີ່ມາຂອງຄຳວ່າ " ສີທັນດອນ " ນີ້ແມ່ນມາຈາກ " ສີທະ " ຈາກເຄົ້າພາສາປາລີ, ໝາຍຄວາມວ່າ " ນ້ຳ " ປະສົມກັບ " ອັນຕະຣະ " ໝາຍຄວາມວ່າ " ລະຫວ່າງນ້ຳ ", " ຕັ້ງກາງນ້ຳ " ຈຶ່ງເປັນ " ສີທັນຕະຣະ " ແລະ " ສີທັນດຣ " ອ່ານເປັນ "

ສີທັນດອນ " ( ຈາກຄຳອະທິບາຍຂອງ ທ່ານ ມະຫາສຳຣິດ ບົວສີສະຫວັດ ແລະ ມະຫາກິແກ້ວ ອຸດົມ, ຊຶ່ງເປັນນັກວິຊາການດ້ານພາສາສາດ ແລະ ວັນນະຄະດີລາວຈາກດອນໂຂງ ), ຄຳສັບ " ສີທັນດອນ " ນີ້ຈຶ່ງຖືກນຳໃຊ້ຕໍ່ມາ ຕັ້ງແຕ່ສະໄໝໄທປົກຄອງ ແຂວງ ຈຳປາສັກ ( 1717-1893 ); ຄົນລາວເຮົາ ໃນສະໄໝໃໝ່ນີ້ ບໍ່ສູ້ຊອກຄົ້ນຫາເຄົ້າມູນຂອງພາສາທີ່ຕົນເວົ້າອອກປາກ ໃດຈຶ່ງເວົ້າ " ຕາມມັກ, ຕາມມ່ວນ," ຈຶ່ງເອີ້ນຊື່ນີ້ພ້ຽນມາຈາກ ສີຣິ(ງາມ) ເປັນ " ສີພັນດອນ" ແຕ່ເມື່ອຖືກຖາມເຖິງຄວາມໝາຍກໍເລີຍຕື່ມໄມ້ເອກໃສ່ວ່າ " ສີ່ພັນ-ດອນ " ຊຶ່ງໝາຍເຖິງ ສີ່ພັນ-ດອນ ຫຼື ດອນສີ່ພັນໜ່ວຍ. ຄວາມຈິງ ເກາະດອນ ໃນທ້ອງຖິ່ນເມືອງໂຂງນີ້ ກໍມີຫຼາຍສົມຄວນໃນແມ່ນ້ຳຂອງ; ແຕ່ ເຖິງຈະຫຼາຍປານໃດ ກໍບໍ່ຮອດສອງຮ້ອຍໜ່ວຍ ຖ້າໄລ່ຕາມດອນທີ່ມີຄົນໄປ ຕັ້ງບ້ານໃສ່ໄດ້, ຖ້າໄລ່ໝົດແທ້ໆ, ທຸກຕ່ອນດິນທີ່ພົ້ນໜ້ານ້ຳໃນເວລານ້ຳບົກ ກໍຄືຈະ ຮອດສີ່ຮ້ອຍໜ່ວຍເທົ່ານັ້ນ, ແຕ່ບໍ່ຮອດ ສີ່ພັນຢ່າງແນ່ນອນ.

ບາງທາງສ່ຽງກ່ຽວກັບຄວາມໝາຍຂອງ " ສີທັນດອນ " ນີ້ກໍເຊື່ອວ່າ: " ໄດ້ພົບເຫັນຮູບຊ້າງຄວັດດ້ວຍຫີນຢູ່ຕີນພູດອນໂຂງ(ວັດພູເຂົາແກ້ວ)[1], ໂຕບໍ່ໃຫຍ່ປານໃດ, ຊາວບ້ານບອກວ່າເທົ່າກັບ " ໝູນ້ອຍ " ອອກໄດ້ອາທິດໜຶ່ງ,ນ້ຳໜັກຄືງບໍ່ເກີນ 5 ກິໂລ, ຫີນນັ້ນຊາວບ້ານບອກວ່າເປັນ " ຫີນສີທັນ " ( ອາດແມ່ນຫີນຊາຍ - Sandstone ຫຼື grès ) ຄືງບອກຕໍ່ກັນໄປເລີຍວ່າ ຊື່ " ສີທັນດອນ " ມາຈາກຊື່ຊ້າງຄວັດດ້ວຍຫີນສີທັນນັ້ນເອງ (ອາດແມ່ນແທ້, ເພາະເປັນຊ້າງຫີນສະໄໝຂອມໄດ້ ) ເມື່ອຖາມຄືນວ່າຊ້າງນັ້ນຢູ່ໃສ ? ກໍເລີຍໄດ້ຄຳຕອບແບບບໍ່ແນ່ນອນວ່າ " ...ແຕ່ກ່ອນເຫັນເພິ່ນເກັບມ້ຽນຢູ່ ວັດກາງ

(1) ວັດພູເຂົາແກ້ວ ຕັ້ງຢູ່ໃກ້ແຄມນ້ຳຂອງ, ເບື້ອງຕາເວັນຕົກສ່ຽງເໜືອຂອງດອນ, ຢູ່ເທິງລານຫີນ, ອຸໂປສົດຂະໜາດ 4x9 ແມັດ, ມີກອງດິນຈີ່ເກົ່າອ້ອມ, ມີດອກຈຳ ປູກອ້ອມອີກ, ຈາກວັດນີ້ຍັງຫຼຽວເຫັນນ້ຳຂອງ, ຍາມແລ້ງມີແກ້ງຫີນອອນຊອນໃຈ. ມີພະປະທານທອງສຳຣິດໜຶ່ງອົງ ຖືວ່າເປັນພຸດທະຮູບສະໄໝລ້ານຊ້າງຕອນາຍໃຫ້ຊື່ວ່າ "ພຣະພຸດທະສິລາເລີດຟ້າ. ຊາວບ້ານແສນຫາດກ່າວວ່າ" ພຣະຄູຂີ້ຫອມ ເປັນຜູ້ມີສັດທານຳພາຫຼູ່ພ້ອມໆ ກັບພຣະອົງແສນ ເມືອງຊຽງແຕງ ທີ່ໄຫລັກໄປ.

ໄຊງ ... ດຽວນີ້, ບໍ່ຮູ້ວ່າຢູ່ໃສ ...".

ສິ່ງທີ່ຜູ້ຂຽນເກັບມາເຫຼົ່າໃຫ້ຟັງນີ້, ແມ່ນພຽງແຕ່ຢາກໃຫ້ຮັບຮູ້ນຳກັນວ່າມັນບໍ່ມີຫຍັງແປກ, ຖ້າມີຈິງກໍບໍ່ຍັງ, ເຄື່ອງເກົ່າແກ່ຄືແນວນີ້ບໍ່ຢູ່ນຳຊາວບ້ານໄດ້, ຄົນສະໄໝນີ້, ບໍ່ເຊື່ອຖືງມງວາຍບໍ່ວ່າແຕ່ຄົນລາວ ຫຼື ຄົນຕ່າງດ້າວໂດຍສະເພາະແມ່ນພວກຕາເວັນຕົກທີ່ຕ້ອງການຂອງເກົ່າແກ່ຂອງບູຮານ ທີ່ນັກວິຊາການເອີ້ນວ່າ " ຊິ້ນສ່ວນວັດຖຸບູຮານ " ນີ້, ເຂົາຍິ່ງມັກເອົາໄປອວດຜູ້ອື່ນ. ແຕ່ເຖົ້າແກ່ຄົນບູຮານລາວເຮົາພັດຖືກັນວ່າເຂັດຂວາງ, ບໍ່ເອົາໄວ້ເຮືອນຈັກເທື່ອ, ມີແຕ່ຝັນຮ້າຍຖ້າແມ່ນຂອງເກົ່າແກ່ແທ້ ເພາະມີ " ອາຖັນ " ( ວິນຍານ ) ນັ້ນແມ່ນຄວາມເຊື່ອຖືຂອງຊາວບ້ານ, ທີ່ເຮົາກໍຄວນຮັບຮູ້ນຳກັນໄວ້ ແລະ ກໍຄວນຫວງແຫນໄວ້ເປັນຂອງຄ້ຳຂອງຄູນ ( ເປັນມິ່ງຄົນ ), ເປັນຂອງສ່ວນລວມ,ເກັບມ້ຽນໃນບ່ອນສັກກາລະບູຊາ,ມ້ຽນໄວ້ວັດເທົ່ານັ້ນ.

ເຖິງຢ່າງໃດກໍຕາມ, ຊື່ " ສີທັນດອນ ຫຼື ສີພັນດອນ " ກໍກາຍເປັນຄວາມໝາຍຂອງເຂດແຄວັນເມືອງໂຂງໄປແລ້ວ. ຖ້າເຮົາຈະອະທິບາຍໃຫ້ແຂກຕ່າງດ້າວທ້າວຕ່າງເມືອງຮັບຮູ້ນຳແບບມີວິທະຍາສາດແດ່, ກໍຕ້ອງບອກທີ່ມາຕາມເຄົ້າຂອງພາສາເຮົາ ຄືເຄົ້າປາລີ ຫຼື ສັນສະກິດ. ຫຼື ຖ້າວ່າຢາກອະທິບາຍຕື່ມອີກກໍບໍ່ຜິດ, ຖ້າຈະຖົມໃສ່ວ່າຄົນພື້ນເມືອງເຂົ້າໃຈວ່າແມ່ນມາຈາກ " ສີພັນດອນ ". ແຕ່ບໍ່ຄວນຊອກຫາແປຕໍ່ໄປວ່າ " ສີພັນ " ແຜງມາຈາກສີຊະນິດໜຶ່ງ... ທີ່ຈະພາໃຫ້ເຊື່ອຖືຍາກຂຶ້ນຕື່ມອີກ.

- ຢາກຊ່ວຍໃຫ້ລາວທຸກທົ່ວໜ້າ, ບໍ່ວ່າຄົນໃນເຂດທ້ອງຖິ່ນນີ້ ຫຼື ຄົນລາວທ້ອງຖິ່ນອື່ນຊອກຮູ້ທ້ອງຖິ່ນຂອງຕົນເອງໃຫ້ລະອຽດ ໂດຍສືບຖາມນຳເຖົ້າແກ່ແນວໂຮມໄວ້ ແລະ ໃຫ້ສາມາດເຫຼົ່າເລື່ອງຂອງທ້ອງຖິ່ນອອກມາໃຫ້ເປັນເອກະພາບກັນໄວ້. ຖ້າບໍ່ແນ່ໃຈກໍຕ້ອງພະຍາຍາມຄົ້ນຄວ້າໄວ້ ແລະຂຽນອອກເປັນເອກະພາບກັນໄວ້ຄັກແນ່; ທັງນີ້ກໍເພື່ອໃຫ້ທ້ອງຖິ່ນຂອງຕົນ

# ຂໍໂທດຫຼາຍໆ

ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...



ດ້ວຍຄວາມຮັກແພງ